ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0 94

ນະຄອນຫຼວງວຽງຈັນ
ຫ້ອງການປົກຄອງເມືອງ

ເລກທີ: /ຫອກ. ສສນ
ລົງວັນທີ 25 MAY 2017

## ແຈ້ງການ

ເຖິງ :ຫ້ອງການ ບ້ານ 37 ບ້ານ ແລະ ຫ້ອງການ 29 ຫ້ອງການພາຍໃນເມືອງສີສັດຕະນາກ.
ເລື່ອງ: ການສ້າງຂະບວນການ ອອກແຮງງານເຮັດອານາໄມໃນວັນເສົາທີ 27/05/2017

- ອີງໃສ່ ທິດຊີ້ນຳຂອງທ່ານ ຮອງເຈົ້າເມືອງ ທີ່ກອງປະຊຸມສ່ອງແສງຫ້ອງວ່າການເມືອງ,ຄັ້ງວັນທີ 22.05.2017.
- ອີງໃສ່ ແຜນການເຄື່ອນໄຫວ ອອກແຮງງານສ້າງຂະບວນການເຮັດອານາໄມຕົວເມືອງ ເດືອນລະ 1-2ຄັ້ງ,ເພື່ອແກ້ໄຂບັນຫາຄວາມບໍ່ສະອາດຕາມເສັ້ນທາງສາຍຫຼັກ 9 ຕົວເມືອງໃນ ນະຄອນຫຼວງວຽງຈັນ.
- ອີງໃສ່ ສະພາບຕົວຈິງຂອງເສັ້ນທາງສາຍຫຼັກພາຍໃນເຂດເມືອງສີສັດຕະນາກປະຈຸບັນມີຄວາມເປື້ອນເປິຕາມສາຍທາງ ແລະ ມີຫຍ້າທີ່ກເຮື້ອເລາະລຽບຕາມຕະຝັ່ງແມ່ນ້ຳຂອງ

ຫ້ອງວ່າການເມືອງສີສັດຕະນາກ ຂໍຖືເປັນກຽດແຈ້ງການຕາມທິດຊີ້ນຳຂອງຂັ້ນເທິງເພື່ອສ້າງຂະບວນການອອກແຮງງານໃນວັນເສົາທີ 27/05/2017.ໂດຍສະເພາະບ້ານທີ່ຢູ່ເລາະລຽບຕາມແຄມທາງເສັ້ນທາງສາຍຫຼັກ ແລະ ເລາະລຽບຕາມຕະຝັ່ງແມ່ນ້ຳຂອງ ແມ່ນຈະເນັ້ນໃສ່ໃຫ້ເຮັດອານາໄມເກັບມ້ຽນຂີ້ເຫຍື້ອ, ຊ້ອນດິນແຄມທາງ ແລະ ຖູຄອນກາງທາງ,ຕັດຫຍ້າແຄມທາງ ພ້ອມທັງອານາໄມຮ່ອງລະບາຍນ້ຳແຄມທາງ ແລະ ຖາງຫຍ້າລຽບຕາມຕະຝັ່ງແມ່ນ້ຳຂອງ,ລາຍລະອຽດດັ່ງລຸ່ມນີ້:

1. ເສັ້ນທາງ ແຄມຂອງ ( ເລີ່ມແຕ່ໄຟແດງວິທະຍາໄລເຕັກນິກການຊ່າງລາວເຢຍລະມັນ - 3 ແຍກທາງຂຶ້ນໂຮງໝໍມະໂຫສົດ ) ມີພາກສ່ວນທີ່ອອກແຮງງານຄື: ມີບ້ານ 37 ບ້ານ,ແລະ ຫ້ອງການມີ 29 ຫ້ອງການອ້ອມຂ້າງເມືອງສີສັດຕະນາກ

ສ່ວນຫ້ອງການ ຄບຕ.ນວ,ຈະຊ່ວຍປະກອບລົດຂົນສົ່ງເກັບມ້ຽນຂີ້ເຫຍື້ອຕາມສາຍທາງຈຳນວນ 01 ຄັນ, ສ່ວນອຸປະກອນມາອອກແຮງງານມີຄື: ຟອຍກວດ, ກະໂລ່ງຊ້ອນຂີ້ເຫຍື້ອຖົງ

ຢາງດຳ ຫຼື ເປົາ,ຊ້ອນ,ຟ້າ,ເຄື່ອງມືຕັດຫຍ້າ,ແມ່ນຂໍມອບໃຫ້ບ້ານແຕ່ລະບ້ານ ແລະ ຫ້ອງການແຕ່ລະຫ້ອງການ ເປັນຜູ້ຮັບຜິດຊອບເອງ ໃນຂະບວນການອອກແຮງງານຄັ້ງນີ້,

ດັ່ງນັ້ນ ຈຶ່ງແຈ້ງການມາຍັງບັນດາທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງວ່າການເມືອງສີສັດຕະນາກ**

ພອນສິນ ສາວະລີ